# ສາຂາທະນາຄານແຫ່ງ ສ ປ ປ ລາວ ພາກກາງ ແຂວງສະຫວັນນະເຂດ ຈັດຝຶກອົບຮົມ ”ວຽກງານການປະຖົມພະຍາບານຂັ້ນຕົ້ນ”




ໃນຕອນແລງ ຂອງວັນທີ 23-24 ມີນາ 2017 ຢູ່ທີ່ຫ້ອງປະຊຸມຊັ້ນ IV ສາຂາທະນາຄານແຫ່ງ ສ ປ ປ ລາວ ພາກກາງ ແຂວງສະຫວັນນະເຂດ, ໄດ້ຈັດຝຶກອົບຮົມ “ການປະຖົມພະຍາບານຂັ້ນຕົ້ນ” ໃຫ້ແກ່ສະມາຊິກ 03 ອົງການຈັດຕັ້ງ, ໂດຍການເຂົ້າຮ່ວມຂອງທ່ານ ບຸນວົງ ດວງດອກເກດ ຫົວໜ້າສາຂາທະນາຄານແຫ່ງ ສ ປ ປ ລາວ ພາກກາງ ແຂວງສະຫວັນນະເຂດ ພ້ອມດ້ວຍມີສະມາຊິກ 03 ອົງການຈັດຕັ້ງເຂົ້າຮ່ວມ, ລວມມີຜູ່ເຂົ້າຮ່ວມທັງໝົດ 51 ທ່ານ, ຍິງ 21 ທ່ານ. ຄູຝຶກແມ່ນມາຈາກຫ້ອງການອົງການກາແດງລາວ ແຂວງສະຫວັນນະເຂດ.

ການຝຶກອົບຮົມການປະຖົມພະຍາບານເບື້ອງຕົ້ນແມ່ນມີຄວາມສຳຄັນຫລາຍ ເຊິ່ງສະມາຊິກທຸກຄົນສາມາດນຳໄປໃຊ້ໃນຊີວິດປະຈຳວັນໃນການຊ່ວຍເຫຼືອຜູ້ບາດເຈັບເບື້ອງຕົ້ນເພື່ອນຳສົ່ງໂຮງໝໍໃຫ້ມີຄວາມປອດໄພ; ການຝຶກອົບຮົມໃນຄັ້ງນີ້ແມ່ນ ພວກເຮົາໄດ້ຮຽນຮູ້ກ່ຽວກັບສະລີລະໃນຮ່າງກາຍຂອງມະນຸດ. ນອກນັ້ນ, ສະມາຊິກຍັງໄດ້ລົງພາກປະຕິບັດຕົວຈິງເຊັ່ນ: ວິທີການເຮັດຊີພີອາໃຫ້ແກ່ຄົນເຈັບທີ່ໝົດສະຕິ, ການຊ່ວຍເຫຼືອເດັກນ້ອຍທີ່ມີເສດອາຫານຕິດຄ້າງໃນຄໍ, ການຫ້າມເລືອດເບື້ອງຕົ້ນ ແລະ ອື່ນໆ. ບັນຍາກາດໃນການຝຶກອົບຮົມແມ່ນເຕັມໄປດ້ວຍບັນຍາກາດຟົດຟື້ນ, ສະມາຊິກມີສິນໃຈຫຼາຍ, ມີການສອບຖາມຄູຝຶກຢ່າງຄຶກຄື້ນ ແລະ ເປັນກັນເອງ.











**(ພາກປະຕິບັດຕົວຈິງແຕ່ລະກິດຈະກຳ)**

ການຝຶກອົບຮົມໄດ້ສິ້ນສຸດລົງໃນຕອນແລງຂອງມື້ທີ່ສອງ ໂດຍຄູຝຶກຈາກຫ້ອງການກາແດງລາວໄດ້ມອບໃບຢັ້ງຢືນຜ່ານການຝຶກອົບຮົມພະຍາບານຂັ້ນຕົ້ນໃຫ້ແກ່ສະມາຊິກທີ່ໄດ້ເຂົ້າຮ່ວມເພື່ອເປັນການຢັ້ງຢືນ ແລະ ນຳໄປໃຊ້ໃນການຊ່ວຍເຫຼືອສັງຄົມໃນຕໍ່ໜ້າ.







*ພາບ ແລະ ຂ່າວ: ສີປະເສີດ ສອນເພັດ*